DEVELOPMENTAL DISABILITIES ADMINISTRATION

# ການແຈ້ງການໝົດກຳນົດໃນເງື່ອນໄຂຮັບການຊ່ວຍເຫລືອເມື່ອອາຍຸສິບ (10) ປີ

## Notification of Age Ten (10) Eligibility Expiration

ຊື່ແລະທີ່ຢູ່ຂອງລູກຄ້າ

ຊື່ແລະທີ່ຢູ່ຂອງຜູ້ຕາງໜ້າຂອງລູກຄ້າ

ລູກຂອງທ່ານໃນປັດຈຸບັນນີ້ເປັນລູກຄ້າຂອງພະແນກປົກຄອງຄວາມເສັ່ຽອິງຄະດ້ານການຈະເຣີນເຕີບໂຕ (DDA). ເງື່ອນໄຂໄດ້ຮັບຂອງລູກຂອງທ່ານນຳພະແນກ DDA ຫມົດກຳນົດໃນວັນເກີດປີທີສິບຂອງເຂົາເຈົ້າ. ເພື່ອວ່າລູກຂອງທ່ານຈະຍັງມີເງື່ອນໄຂໄດ້ຮັບການບໍຣິການຂອງພະແນກ DDA ຢູ່, ທ່ານຕ້ອງໄດ້ຂໍເອົາໃຫມ່ກ່ອນທີ່ລູກຂອງທ່ານຈະຮອດອາຍຸສິບປີ. ລູກຂອງທ່ານຕ້ອງຖືກພິຈາຣະນາພົບໃຫມ່ອີກວ່າມີເງື່ອນໄຂໄດ້ຮັບພາຍໃຕ້ເງື່ອນໄຂຕໍ່ລົງໄປນີ້:

ຄວາມເສັ່ຽອິງຄະດ້ານມັນສະມອງ, ສະມອງພິການ, ໂຣກລົມບ້າໝູ, ໂຣກລະເມີເພີ້ຟັນ, ໂຣກປະສາດຢ່າງອື່ນ ຫລືສະພາບພະຍາດອື່ນໆທີ່ມີອາການຄ້າຍຄືກັນກັບຄວາມເສັ່ຽອິງຄະດ້ານມັນສະມອງ.

ພວກເຮົາໄດ້ຕິດຄັດ *ຕາຕລາງການບັນທຶກທີ່ຈຳເປັນຕ້ອງມີ* ເພື່ອໃຫ້ທ່ານຮູ້ວ່າເອກະສານແນວໃດທີ່ຕ້ອງການຈຳເປັນເພື່ອເຮັດການພິຈາຣະນາເບິ່ງອັນນີ້.

**ຈະຮ້ອງຂໍເອົາໃຫມ່ໄດ້ແນວໃດ:**

ຈົ່ງຕິດຕໍ່ຫາພະນັກງານສຳພາດ ແລະ ເງື່ອນໄຂໄດ້ຮັບຂອງພະແນກ DDA ຢ່າງຫນ້ອຍ 90 ວັນກ່ອນວັນເກີດປີທີສິບຂອງລູກຂອງທ່ານ ເພື່ອຈະຮ້ອງຂໍເອົາຊຸດຄຳຮ້ອງຂໍໃຫມ່. ທ່ານສາມາດເຮັດອັນນີ້ໄດ້ໂດຍທາງຫນັງສື ຫລື ໂດຍການໂທໄປຫາເລກໂທຣະສັບທີ່ຖືກບົ່ງຢູ່ຂ້າງລຸ່ມນີ້.ຊຸດຄຳຮ້ອງຈະຖືກສົ່ງໄປໃຫ້ທ່ານທາງໄປສະນີ. ທ່ານຍັງຈະຂໍເອົາເອກສານຄຳຮ້ອງໄດ້ອີກຄືກັນໂດຍທາງອອນລາຍນ໌ໂດຍການແວ່ເຂົ້າເບິ່ງ https://www.dshs.wa.gov/dda/consumers-and-families/eligibility.

**ຖ້າຫາກວ່າຂ້ອຍບໍ່ຮ້ອງຂໍເອົາໃຫມ່ເດ?**

ຖ້າຫາກວ່າທ່ານບໍ່ຮ້ອງຂໍເອົາຊຸດຄຳຮ້ອງຂໍຄືນໃຫມ່ ຫລື ຖ້າຫາກວ່າທ່ານບໍ່ສົ່ງຄຳຮ້ອງກັບຄືນມາຢ່າງຫນ້ອຍ 60 ວັນກ່ອນວັນເກີດປີທີສິບຂອງລູກຂອງທ່ານ, ເງື່ອນໄຂໄດ້ຮັບຂອງລູກຂອງທ່ານນຳພະແນກ DDA ຈະຫມົດກຳນົດໃນວັນເກີດປີທີສິບຂອງລາວ. ຖ້າຫາກວ່າລູກຂອງທ່ານໄດ້ຮັບການບໍຣິການທີ່ຖືກຈ່າຍເງິນໃຫ້ນຳພະແນກ DDA, ການບໍຣິການອັນນີ້ຈະຫມົດກຳນົດໃນວັນເກີດປີທີສິບຂອງລາວ.

**ການຫມົດກຳນົດຂອງເງື່ອນໄຂໄດ້ຮັບຂອງພະແນກ DDA ຈະບໍ່ສະທ້ອນເຖິງການເຂົ້າຮ່ວມໃນໂຄງການສຶກສາພິເສດ ຫລື ເງື່ອນໄຂໄດ້ຮັບເງິນ SSI, ຫລື ວ່າມັນຈະສະທ້ອນເຖິງການບໍຣິການຂອງກົມ DSHS ແນວອື່ນແນວໃດແນວນຶ່ງທີ່ທ່ານອາດຈະໄດ້ຮັບຢູ່ເຊັ່ນວ່າເມດີເຄດ, TANF, ຫລື ຟູດສະແຕມ.**

ກະຣຸນາຕອບມາໄວເທົ່າທີ່ຈະໄວໄດ້, <u>ແຕ່ວ່າຢ່າງຫນ້ອຍ 90 ວັນກ່ອນວັນເກີດປີທີສິບຂອງລູກຂອງທ່ານ</u>. ຖ້າພວກເຮົາບໍ່ໄດ້ຍິນຂ່າວຈາກທ່ານ, ພວກເຮົາຈະຖືວ່າທ່ານບໍ່ຢາກສືບຕໍ່ເງື່ອນໄຂຮັບການຊ່ວຍເຫລືອຂອງລູກຂອງທ່ານນຳພະແນກ DDA. ປາສຈາກເອກະສານທີ່ເໝາະສົມສຳລັບເງື່ອນໄຂໄດ້ຮັບການຊ່ວຍເຫລືອກ່ອນອາຍຸ 10 ປີ, ເງື່ອນໄຂໄດ້ຮັບ DDA ແລະ ການບໍຣິການຂອງ DDA ຂອງລູກຂອງທ່ານຈະໝົດກຳນົດລົງໃນມື້ວັນເກີດທີ່ສິບ (10) ຂອງເຂົາເຈົ້າ.

ຖ້າທ່ານມີຄຳຖາມ ຫລື ປະສົງປາກຂໍເອົາຊຸດເອກສານ, ກະຣຸນາຕິດຕໍ່ຫາ:

| ຊື່ | ເລກໂທຣະສັບ | ທີ່ຢູ່ອີແມລ໌ |
|---|---|---|

ໂກປີຂອງກົດຣະບຽບຕ່າງໆຂອງຣັດທີ່ປົກຄອງເງື່ອນໄຂໄດ້ຮັບ (WAC 388-823) ແມ່ນມີໃວ້ໃຫ້ຕາມການຮ້ອງຂໍ ຫລື ທາງອອນລາຍນ໌ທີ່ https://www.dshs.wa.gov/dda/consumers-and-families/eligibility.

ສອດມານຳ: ຕາຕະຣາງການບັນທຶກທີ່ຈຳເປັນຕ້ອງມີ

Cc: ເອກະສານຂອງລູກຄ້າ
ຜູ້ຕາງໜ້າດ້ານກົດໝາຍ

## ຕາຕະລາງຂອງເອກສານບັນທຶກທີ່ຈຳເປັນຕ້ອງມີ

| **ສະພາບຂອງຄວາມເສັຽອົງຄະ** | **ອາຍຸ** | **ການວິຈັຍໂຣກ** | **ຜູ້ວິຈັຍໂຣກ** | **ບັນທຶກອື່ນໆ** |
|---|---|---|---|---|
| ຄວາມເສັຽອົງຄະດ້ານມັນສະມອງ (Intellectual Disability) | ອາຍຸ 4 ປີ ແລະ ແກ່ກວ່າ | ຄວາມເສັຽອົງຄະດ້ານມັນສະມອງ (ແຕ່ກ່ອນແມ່ນຄວາມອຸ້ກອ້ຳດ້ານມັນສະມອງ) | ທ່ານໝໍຈິດວິທະຍາທີ່ມີໃບປະກາດ, ທ່ານໝໍຈິດວິທະຍາທີ່ໂຮງຮຽນຢັ້ງຢືນໃນວໍຊິງຕັນ ຫລື ທ່ານໝໍຈິດວິທະຍາທີ່ມີໃບປະກາດຈາກໂຮງຮຽນອື່ນທີ່ຖືກຢັ້ງຢືນໂດຍສະມາຄົມຂອງໂຮງຮຽນທ່ານຫມໍຈິດວິທະຍາແຫ່ງຊາດ | ໃບລາຍງານໂຣກຈິດຄົບຖ້ວນລວມທັງຄະແນນ Full Scale IQ ຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ, ແລະ ຄະແນນການສອບເບິ່ງຄວາມຊຳນານໃນການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ. |
| ສະມອງພິການ (Cerebral Palsy) | ອາຍຸ 4 ປີ ແລະ ແກ່ກວ່າ | ໂຣກສະມອງພິການ (Cerebral Palsy) ພາວະແຂນແລະຂາອຳມະພາດ (Quadriplegia) ອຳມະພາດເຄິ່ງສ່ວນ (Hemiplegia) ອຳມະພາດສ່ວນດຽວ (Diplegia) | ທ່ານໝໍຈິດທີ່ມີໃບປະກາດ | ອາການກ່ອນອາຍຸ 3 ປີ, ແລະ ຣາຍຣະອຽດທີ່ອູ້ມຊູຄວາມຕ້ອງການສຳລັບຄວາມຊ່ວຍເຫລືອທາງຮ່າງກາຍໂດຍກິງປະຈຳວັນໃນສອງຈຳພວກ ຫລື ຫລາຍກວ່າ (ການເຂົ້າຫ້ອງນ້ຳ, ການອາບນ້ຳ, ການກິນອາຫານ, ການນຸ່ງເຄື່ອງ, ການເຄື່ອນໄຫວໄປມາ, ຫລື ການສື່ສານຕິດຕໍ່) . |
| ໂຣກລົມບ້າຫມູ (Epilepsy) | ອາຍຸ 4 ປີ ແລະ ແກ່ກວ່າ | ໂຣກລົມບ້າໝູ ຫລື ໂຣກຊັກກິ້ນ | ທ່ານຫມໍໂຣກປະສາດທີ່ຖືກຢັ້ງຢືນໂດຍຄະນະກັມມະການ | ການວິຈັຍໂຣກທີ່ຖືກອີງໃສ່ປະວັດການພະຍາບານ ແລະ ການກວດເບິ່ງໂຣກປະສາດ, ການຢັ້ງຢືນຈາກທ່ານຫມໍ ຫລື ທ່ານຫມໍໂຣກຈິດກ່ຽວກັບການຊັກບ້າຫມູທີ່ຄວບຄຸມບໍ່ໄດ້ ແລະ ເກີດຂຶ້ນຕະລອດມາ ຫລື ເກີດຂຶ້ນເປັນປະຈຳ, ແລະ ການກວດເບິ່ງຄວາມຊຳນານໃນການປັບຕົວຊຶ່ງສະແດງໃຫ້ເຫັນການມີຂອບເຂດຈຳກັດຮ້າຍແຮງໃນການທຳງານການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ. |
| ໂຣກລະເມີເພີ້ຝັນ (Autism) (per DSM-IV) | ອາຍຸ 4 ປີ ແລະ ແກ່ກວ່າ | ໂຣກລະເມີເພີ້ຝັນຫລື ພະຍາດທີ່ຄືລະເມີເພີ້ຝັນ (Autism ຫລື Autistic Disorder) Per 299.00 ໃນ DSM-IV-TR | ທ່ານໝໍຈິດວິທະຍາທີ່ມີໃບປະກາດ, ຜູ້ຝຶກຫັດນາຍຫມໍລົງທະບຽນທີ່ກ້າວຫນ້າ (ARNP) ທີ່ພົວພັນນຳໂຣກລະເມີເພີ້ຝັນ ຫລື ສູນກາງພັດທະນາ ຫລື ຄະນະກັມມະການຢັ້ງຢືນ: ທ່ານຫມໍໂຣກປະສາດ, ທ່ານຫມໍໂຣກຈິດ, ຫລື ທ່ານຫມໍປິ່ນປົວເດັກເຣື່ອງການເຕີບໂຕ ແລະ ການປະພຶດ | ການຕີຣາຄາປະເມີນຜົນຄົບຖ້ວນ per DSM IV ທີ່ສອດຄ່ອງນຳກົດເກນຂອງການກວດວິຈັຍທຸກໆຢ່າງ, ຫລັກຖານຂອງການຊັກຊ້າ ຫລື ການທຳງານທີ່ຜິດປົກກະຕິກ່ອນອາຍຸ 3 ປີ ໃນຄວາມຊຳນານທາງສັງຄົມ, ພາສາ, ການຕິດຕໍ່ສື່ສານ ຫລື ການຫລິ້ນທີ່ເປັນສັນຍາລັກ ຫລື ການວາດພາບ, ແລະ ການກວດເບິ່ງຄວາມຊຳນານໃນການປັບຕົວຊຶ່ງສະແດງໃຫ້ເຫັການມີຂອບເຂດຈຳກັດຮ້າຍແຮງໃນການທຳງານການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ. |
| ໂຣກລະເມີເພີຝັນໄປທົ່ວທິບ (Autism Spectrum Disorder) (per DSM-V) | ອາຍຸ 4 ປີ ແລະ ແກ່ກວ່າ | ໂຣກລະເມີເພີຝັນໄປທົ່ວທິບ (Autism Spectrum Disorder 299.00) Per DSM-V ລວມທັງຣະດັບຄວາມຮ້າຍແຮງ 2 ຫລື 3 ໃນທັງສອງແຖວຕັ້ງ | ທ່ານໝໍຈິດວິທະຍາທີ່ມີໃບປະກາດ, ຜູ້ຝຶກຫັດນາຍຫມໍລົງທະບຽນທີ່ກ້າວຫນ້າ (ARNP) ທີ່ພົວພັນນຳໂຣກລະເມີເພີ້ຝັນ ຫລື ສູນກາງພັດທະນາ ຫລື ຄະນະກັມມະການຢັ້ງຢືນ: ທ່ານຫມໍໂຣກປະສາດ, ທ່ານຫມໍໂຣກຈິດ, ຫລື ທ່ານຫມໍປິ່ນປົວເດັກເຣື່ອງການເຕີບໂຕ ແລະ ການປະພຶດ | ການຕີຣາຄາປະເມີນຜົນຄົບຖ້ວນ per DSM-V ທີ່ສອດຄ່ອງນຳກົດເກນຂອງການກວດວິຈັຍທຸກໆຢ່າງ, ຫລັກຖານຂອງການຊັກຊ້າ ຫລື ການທຳງານທີ່ຜິດປົກກະຕິກ່ອນອາຍຸ 3 ປີ ໃນຄວາມຊຳນານທາງສັງຄົມ, ພາສາ, ການຕິດຕໍ່ສື່ສານ ຫລື ການຫລິ້ນທີ່ເປັນສັນຍາລັກ ຫລື ການວາດພາບ, ແລະ ການກວດເບິ່ງຄວາມຊຳນານໃນການປັບຕົວຊຶ່ງສະແດງໃຫ້ເຫັການມີຂອບເຂດຈຳກັດຮ້າຍແຮງໃນການທຳງານການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ,ແລະ FSIQ ຂອງການແຕກຕ່າງຈາກມາດຕະຖານອັນນຶ່ງ ຫລື ຫລາຍກວ່ານັ້ນທີ່ຕ່ຳກວ່າກຳນົດ – ຫລື – ສອດຄ່ອງນຳກົດເກັນທຸກໆຢ່າງສຳລັບໂຣກ Autistic Disorder 299.00 per DSM-IV. |
| ໂຣກປະສາດແນວອື່ນ ຫລື ສະພາບແນວອື່ນທີ່ຄ້າຍຄືກັນກັບຄວາມເສັຽອົງຄະດ້ານມັນສະມອງ | ອາຍຸ 4 ປີ ແລະ ແກ່ກວ່າ | ຄວາມຜິດປົກກະຕິທາງໂຣກປະສາດ ຫລື ກັມມະພັນເປັນທີ່ຮູ້ຈັກວ່າກໍ່ໃຫ້ເກີດມີຄວາມຂາດເຂີນໃນຄວາມຊຳນານທາງແນວຄິດ ແລະ ການປັບຕົວ | ທ່ານໝໍທີ່ມີໃບປະກາດ | ຄະແນນ Full Scale IQ ຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າ 1.5 ຢ່າງຕ່ຳກວ່າກຳນົດ, ແລະ ຄະແນນການສອບເບິ່ງຄວາມຊຳນານໃນການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ. |

**ຫມາຍເຫດ:** ໃບຟອມໃບນີ້ແມ່ນການຊີ້ນຳທົ່ວໄປເທົ່ານັ້ນ ແລະ **DDA** ອາດຈະຕ້ອງການຣາຍຣະອຽດ ຫລື ການຕີຣາຄາປະເມີນຜົນເພີ້ມເຕີມອີກ. ເອກສານບັນທຶກອັນນີ້ເປັນບາດກ້າວທຳອິດໃນການພິຈາຣະນາເບິ່ງເງື່ອນໄຂໄດ້ຮັບ. ເງື່ອນໄຂໄດ້ຮັບຂອງ **DDA** ຈະຖືກພິຈາຣະນາເບິ່ງໂດຍອີງຕາມກົດຫມາຍ **WAC Chapter 388-823.**